# ການຫຼຸດຜ່ອນຜົນກະທົບ ຂອງການປ່ຽນແປງ ສະພາບດິນຟ້າອາກາດ

ການປ່ອຍທາດອາຍການກບອນ



**62** ແຫຼ່ງກຳເນີດຫຼັກຂອງທາດອາຍເຮືອນແກ້ວທີ່ມະນຸດສ້າງຂຶ້ນ ແມ່ນມາຈາກ:

A ການຕັດໄມ້ທຳລາຍປ່າ

B ການຂົນສົ່ງຍານພາຫະນະ

C ການຜະລິດ ແລະ ນຳໃຊ້ພະລັງງານ

D ກະສິກຳ

**63** ປະເທດທີ່ປ່ອຍທາດອາຍເຮືອນແກ້ວຫຼາຍທີ່ສຸດ ແມ່ນປະເທດໃດ?

A ສະຫະລັດອາເມຣິກາ

B ຈີນ

C ຣັດເຊຍ

D ສະຫະຣາຊະອານາຈັກອັງກິດ

**64** ແຫຼ່ງພະລັງງານໃດດັ່ງຕໍ່ໄປນີ້ ທີ່ຈັດເຂົ້າໃນພະລັງງານແບບບໍ່ໝຸນວຽນ?

A ພະລັງງານກະແສນ້ຳ

B ເຊື້ອໄຟຊີວະພາບ

C ນ້ຳມັນດິບ

D ພະລັງງານແສງຕາເວັນ

**65** ແຫຼ່ງພະລັງງານໃດດັ່ງຕໍ່ໄປນີ້ ທີ່ບໍ່ແມ່ນນ້ຳມັນເຊື້ອໄຟ?

A ຢູເຣນຽມ (Uranium)

B ນ້ຳມັນທຳມະຊາດ

C ດິນຖ່ານຕີມ

D ຖ່ານຫີນ

**66** ແຫຼ່ງພະລັງງານໃດດັ່ງຕໍ່ໄປນີ້ ທີ່ຖືກນຳໃຊ້ຫຼາຍທີ່ສຸດໃນໂລກ?

A ນ້ຳມັນທຳມະຊາດ

B ນ້ຳມັນດິບ

C ໄມ້

D ພະລັງງານລົມ

**67** ແຫຼ່ງພະລັງງານໃດດັ່ງຕໍ່ໄປນີ້ ທີ່ເປັນມິດຕໍ່ກັບສິ່ງແວດລ້ອມທີ່ສຸດ?

A ຖ່ານຫີນ

B ນ້ຳມັນທຳມະຊາດ

C ພະລັງງານແສງຕາເວັນ

D ນ້ຳມັນດິບ

**68** ແຫຼ່ງພະລັງງານໃດດັ່ງຕໍ່ໄປນີ້ ທີ່ປ່ອຍທາດອາຍເຮືອນແກ້ວຫຼາຍທີ່ສຸດ ຕໍ່ຫົວໜ່ວຍພະລັງງານທີ່ຜະລິດໄດ້?

A ຖ່ານຫີນ

B ພະລັງງານແສງຕາເວັນ

C ນ້ຳມັນດິບ

D ນ້ຳມັນທຳມະຊາດ

**69** ສິ່ງໃດຕໍ່ໄປນີ້ ທີ່ບໍ່ສາມາດສະກັດໄດ້ຈາກນ້ຳມັນດິບ?

A ແກ້ວ

B ຢາງພາລາ

C ຟຼາສຕິກ

D ອາຍກ໋າສ

**70** ຄວາມແຕກຕ່າງລະຫວ່າງໂຮງໄຟຟ້າພະລັງງານຄວາມຮ້ອນແບບລວມ (CHPP) ແລະ ໂຮງໄຟຟ້າພະລັງງານຄວາມຮ້ອນຖ່ານຫີນ (TPP) ມີຄືແນວໃດ?

A CHPP ໃຊ້ຄວາມຮ້ອນ ເພື່ອເຮັດໃຫ້ນ້ຳອຸ່ນ ແລະ TPP ໃຊ້ຜະລິດໄຟຟ້າ

B CHPP ໃຊ້ຜະລິດໄຟຟ້າ ສຳລັບຕົວເມືອງຂະໜາດໃຫຍ່ ສ່ວນ TPP ໃຊ້ຜະລິດໄຟຟ້າສຳລັບຕົວເມືອງນ້ອຍ ແລະ ໝູ່ບ້ານ

C CHHP ໃຊ້ຜະລິດໄຟຟ້າ ແລະ ຄວາມຮ້ອນ ສ່ວນ TPP ໃຊ້ຜະລິດໄຟຟ້າຢ່າງດຽວ

D CHPP ແມ່ນສະຖານີສູນກາງທີ່ເຮັດໜ້າທີ່ກະຈາຍຄວາມຮ້ອນ ຊຶ່ງໄດ້ຮັບພະລັງງານມາຈາກໂຮງໄຟຟ້າ TPP ຂະໜາດນ້ອຍ

## 71 ບັນຫາຕົ້ນຕໍຂອງໂຮງໄຟຟ້າພະລັງງານນິວເຄຼຍ ແມ່ນຫຍັງ?

A ປ່ອຍກ໋າສກາກບອນ ໄດອ໋ອກໄຊ ຫຼາຍກ່ວາໂຮງໄຟຟ້າອື່ນໆ

B ສ້າງສິ່ງເສດເຫຼືອທີ່ມີກຳມັນຕະພາບລັງສີອັນຕະລາຍ ຊຶ່ງມີຄວາມສ່ຽງທີ່ຈະເຮັດໃຫ້ເກີດຜົນກະທົບທີ່ເປັນອັນຕະລາຍຕາມມາ

C ການຊອກຫາສະຖານທີ່ເໝາະສົມແມ່ນມີຄວາມຫຍຸ້ງຍາກ

D ຄັງສຳຮອງນ້ຳມັນເຊື້ອໄຟທີ່ຜະລິດຈາກນິວເຄຼຍໃກ້ຈະໝົດແລ້ວ

**72** ກັງຫັນລົມ offshore wind farms ຖືກສ້າງຂຶ້ນຢູ່:

A ເທິງໜ້າດິນ, ແຄມຊາຍຝັ່ງ

B ກາງມະຫາສະໝຸດ

C ເຂດພູດອຍ

D ຢູ່ທະເລ ຊຶ່ງບໍ່ໄກຈາກຊາຍຝັ່ງ

**73** ພະລັງງານຊີວະມວນ ຈັດເຂົ້າໃນພະລັງງານທົດແທນບໍ?

| | |
|---|---|
| A | ບໍ່, ຍ້ອນວ່າຊາກສິ່ງທີ່ມີຊີວິດທີ່ເກົ່າແກ່ ຢູ່ໃຕ້ເປືອກໂລກບໍ່ສາມາດຖືກທົດແທນໄດ້ |
| B | ບໍ່, ຍ້ອນວ່າພະລັງງານຂອງມັນຖືກປ່ຽນເປັນກະແສໄຟຟ້າ ໂດຍຜ່ານການເຜົາໄໝ້ |
| C | ແມ່ນ, ຍ້ອນວ່າພະລັງງານບໍ່ສາມາດຖືກທຳລາຍໄດ້ |
| D | ແມ່ນ, ຍ້ອນວ່າພືດສາມາດເຕີບໂຕຄືນໃໝ່ໄດ້ |

**74** ຢູ່ປະເທດບຣາຊິນ, 1/5 ຂອງນ້ຳມັນເຊື້ອໄຟ ສຳລັບຍານພາຫະນະ ແມ່ນຜະລິດຈາກ:

A ເປືອກໝາກທ້ວຍ

B ເມັດກາເຟ

C ຕົ້ນອ້ອຍ

D ນ້ຳມັນໝາກພ້າວ

**75** ໂຮງໄຟຟ້າໃດດັ່ງຕໍ່ໄປນີ້ ທີ່ບໍ່ນຳໃຊ້ພະລັງງານນ້ຳ?

A ເຂື່ອນໄຟຟ້ານ້ຳຕົກ

B ໂຮງໄຟຟ້າພະລັງງານຄວາມຮ້ອນຖ່ານຫີນ

C ໂຮງໄຟຟ້າທີ່ນຳໃຊ້ຈັກສູບນ້ຳ

D ໂຮງໄຟຟ້າທີ່ນຳໃຊ້ພະລັງງານຄື້ນ

**76** ປະເທດໃດ ຢູ່ໃນທະວີບເອີຣົບດັ່ງຕໍ່ໄປນີ້ ທີ່ເປັນທີ່ຮູ້ຈັກໃນເລື່ອງ ກິດຈະກຳພູເຂົາໄຟ, ຜະລິດໄຟຟ້າ ໄດ້ເຖິງ 1/3 ຂອງໄຟຟ້າທັງ ໝົດຈາກໂຮງໄຟຟ້າພະລັງງານຄວາມຮ້ອນໃຕ້ດິນ?

A ສະເປນ

B ອິຕາລີ

C ອິດສະລັງ (Iceland)

D ອຽກລັງ (Ireland)

**77** ປະລິມານໄຟຟ້າທັງໝົດທົ່ວໂລກ ທີ່ຜະລິດຈາກແຫຼ່ງພະລັງງານທົດແທນ (ລວມທັງເຂື່ອນໄຟຟ້ານ້ຳຕົກ) ແມ່ນເທົ່າໃດ?

A ໜ້ອຍກ່ວາ 5 ເປີເຊັນ

B 10 ເປີເຊັນ

C 15 ເປີເຊັນ

D ຫຼາຍກ່ວາ 20 ເປີເຊັນ

**78** ປະເທດໃດດັ່ງຕໍ່ໄປນີ້ ທີ່ເປັນປະເທດທຳອິດ ທີ່ສາມາດ ຜະລິດໄດ້ເຖິງ 50 ເປີເຊັນ ຂອງພະລັງງານທັງໝົດ ທີ່ ມາຈາກທົ່ງກັງຫັນລົມ?

A ອິດສະຕາລີ

B ດານມາກ

C ສະຫະລັດອາເມຣິກາ

D ສະຫະຣາຊະອານາຈັກອັງກິດ

**79** ເມືອງໃດດັ່ງຕໍ່ໄປນີ້ ທີ່ນຳໃຊ້ພະລັງງານແສງຕາເວັນຫຼາຍທີ່ສຸດ?

A ບາງກອກ

B ອ໋ອສໂລ

C ລອນດອນ

D ມົດສະກູ

**80** ໂຮງໄຟຟ້າພະລັງງານນ້ຳ ທຳອິດຂອງໂລກ ສ້າງຂຶ້ນຢູ່ໃນປະເທດໃດດັ່ງຕໍ່ໄປນີ້?

A ຍີ່ປຸ່ນ

B ສະຫະຣາຊະອານະຈັກອັງກິດ

C ຝຣັ່ງ

D ສະຫະລັດອາເມຣິກາ

**81** ຄວາມໝາຍຂອງສະຫຼາກສິນຄ້າ “Class A” ທີ່ຕິດຢູ່ເທິງອຸປະກອນໄຟຟ້າ ທີ່ຜະລິດຢູ່ໃນສະຫະພາບເອີຣົບ ໝາຍຄວາມວ່າແນວໃດ?

A ອຸປະກອນດັ່ງກ່າວ ຖືກຜະລິດຈາກໂຮງງານທີ່ມີການນຳໃຊ້ພະລັງງານຢ່າງມີປະສິດທິພາບ

B ອຸປະກອນດັ່ງກ່າວ ແມ່ນປອດໄພຕໍ່ການນຳໃຊ້

C ອຸປະກອນດັ່ງກ່າວ ມີປະສິດທິພາບສູງ

D ອຸປະກອນດັ່ງກ່າວໃຊ້ພະລັງງານໜ້ອຍ

# 82 ກ້ອງ Thermal ແມ່ນນຳໃຊ້ວັດແທກຫຍັງ?

| | |
|---|---|
| A | ການສູນເສຍຄວາມຮ້ອນຈາກທໍ່ທີ່ຢູ່ພາຍໃນອາຄານທີ່ຢູ່ອາໄສ ແລະ ຕຶກອາຄານສາທາລະນະ |
| B | ການກະຈາຍຄວາມຮ້ອນເທິງໜ້າດິນ, ເຊັ່ນ ຝາຕຶກອາຄານ |
| C | ການປ່ອຍທາດການກບອນໄດອ໋ອກໄຊ ຈາກໂຮງງານອຸດສາຫະກຳ |
| D | ປະລິມານຄວາມຮ້ອນ ທີ່ຖືກນຳໃຊ້ ເພື່ອເຮັດໃຫ້ຕຶກອາຄານອຸ່ນຂຶ້ນ |

**83** ການກະທຳໃດດັ່ງຕໍ່ໄປນີ້ ເພື່ອຮັກສາລະດັບອຸນຫະພູມ ພາຍໃນອາຄານ ທີ່ບໍ່ເປັນມິດຕໍ່ກັບສິ່ງແວດລ້ອມ?

A ການນຳໃຊ້ເຄື່ອງເຮັດຄວາມຮ້ອນ

B ການນຳໃຊ້ແຜ່ນສະທ້ອນຄວາມຮ້ອນຢູ່ທາງຫຼັງຂອງ ເຄື່ອງແຜ່ຄວາມຮ້ອນ

C ໃຊ້ສະນອມກັນຄວາມຮ້ອນຢູ່ປະຕູໜ້າເຮືອນ

D ປິດຮອຍແຕກຢູ່ຕາມຂອບປ່ອງຢ້ຽມ

**84** ເປັນຫຍັງການນຳໃຊ້ຫຼອດໄຟ LED ຈຶ່ງດີກ່ວາ ດອກໄຟຟລູອໍເລສເຊນ ທີ່ປະຢັດພະລັງງານ ເຖິງແມ່ນ ວ່າຈະລາຄາສູງກວ່າກໍ່ຕາມ?

A ມີການອອກແບບທີ່ຫຼາກຫຼາຍຂຶ້ນ ຊຶ່ງແທດເໝາະກັບ ໂຄມໄຟປະເພດຕ່າງໆ

B ສາມາດຖິ້ມຮ່ວມກັນໄດ້ກັບຂີ້ເຫຍື້ອປະເພດທົ່ວໄປ (ບໍ່ ຈຳເປັນຕ້ອງມີການດຳເນີນການສະເພາະ)

C ບໍ່ມີສານບາຫຼອດທີ່ເປັນອັນຕະລາຍ, ອາຍຸການນຳໃຊ້ຄົ ນກວ່າ ແລະ ກິນໄຟໜ້ອຍກ່ວາ

D ບໍ່ຫັກແຕກງ່າຍ ເນື່ອງຈາກວ່າເຮັດມາຈາກພຼາສຕິກທີ່ ແຂງແຮງເປັນພິເສດ

# 85 ນິຍາມຂອງຄຳວ່າ ‘ກາກບອນຟຸດພຣິ້ນ’ ມີຄືແນວໃດ?

A ການປ່ອຍທາດອາຍກາກບອນ ໄດອ໋ອກໄຊ ຈາກໂຮງງານອຸດສາຫະກຳທັງໝົດ

B ຄັງສຳຮອງກາກບອນ ຢູ່ໃນປ່າໄມ້ຂອງໂລກ

C ການປ່ອຍທາດອາຍເຮືອນແກ້ວທັງໝົດ (ໂດຍທາງກົງ ຫຼື ທາງອ້ອມ) ໂດຍບຸກຄົນ, ອົງກອນ, ເຫດການ, ຜະລິດຕະພັນ, ເມືອງ ຫຼື ປະເທດໃດໜຶ່ງ

D ຄັງສຳຮອງທີ່ປ່ຽນທາດອາຍກາກບອນ ໄປສູ່ ທາດອາຍກາກບອນໄດອ໋ອກໄຊ ເວລາເຜົາໄໝ້ນ້ຳມັນດິບ ແລະ ນ້ຳມັນທຳມະຊາດ ເພື່ອຜະລິດກະແສໄຟຟ້າ

**86** ກາກບອນໄດອ໋ອກໄຊທຽບເທົ່າ (CO2 equivalent) ນຳໃຊ້ເຂົ້າໃນການຄິດໄລ່ຫຍັງ?

A ປະລິມານທາດອາຍກາກບອນໄດອ໋ອກໄຊທັງໝົດ ທີ່ຖືກປ່ອຍຂຶ້ນສູ່ຊັ້ນບັນຍາກາດ ໂດຍບໍລິສັດ ຫຼື ອົງກອນຕ່າງໆ

B ການປະຢັດການນຳໃຊ້ນ້ຳມັນ ເພື່ອເຮັດໃຫ້ຕົກອາຄາມອຸ່ນຂຶ້ນ

C ປະລິມານກາກບອນໄດອ໋ອກໄຊ ທີ່ດູດຊຶມໂດຍຕົ້ນໄມ້ ຕະຫຼອດຊ່ວງອາຍຸ

D ບໍລິມາດຂອງທາດອາຍເຮືອນແກ້ວທັງໝົດ ທີ່ຖືກປ່ອຍຈາກກິດຈະກຳຕ່າງໆ ຊຶ່ງໃສ່ຄ່າ CO2 ເພື່ອສະດວກຕໍ່ການວັດແທກ ແລະ ເຂົ້າໃຈງ່າຍ

**87** ວິທີທີ່ດີທີ່ສຸດໃນການກວດກາປະສິດທິພາບຂອງເຄື່ອງໃຊ້ໄຟຟ້າພາຍໃນເຮືອນ ແມ່ນວິທີໃດ?

A ສະຫຼາກທີ່ຊີ້ບອກເຖິງການປະຢັດພະລັງງານ

B ການອ່ານຄ່າມິດເຕີໄຟຟ້າ

C ອາຍຸການນຳໃຊ້ຂອງເຄື່ອງໃຊ້ໄຟຟ້າ

D ວັດສະດຸທີ່ໃຊ້ເຂົ້າໃນການຜະລິດເຄື່ອງໃຊ້ໄຟຟ້າ

**88** ບຸກຄົນທົ່ວໄປ ຫຼື ບໍລິສັດ ສາມາດຊົດເຊີຍປະລິມານການປ່ອຍທາດອາຍການກ່ອນໄດ້ຄືແນວໃດ?

A ເລືອກໃຊ້ອຸປະກອນໃໝ່ທີ່ປະຢັດພະລັງງານ

B ປິດອຸປະກອນເຄື່ອງໃຊ້ ແລະ ດອກໄຟ ເວລາບໍ່ໄດ້ໃຊ້ງານ

C ຫຼຸດຜ່ອນຈຳນວນດອກໄຟ

D ປູກຕົ້ນໄມ້

**89** ການຂົນສົ່ງປະເພດໃດດັ່ງຕໍ່ໄປນີ້ ທີ່ປ່ອຍທາດອາຍເຮືອນແກ້ວຫຼາຍທີ່ສຸດ?

A ລົດໄຟ

B ເຮືອ

C ລົດຖີບ

D ຍານພາຫະນະຕາມທ້ອງຖະໜົນ

**90** ຄວາມໝາຍຂອງ ຄຳວ່າ ຄາພູລ໌ (Carpool) ແມ່ນຫຍັງ?

A ຍານພາຫະນະຊະນິດໃໝ່ທີ່ນຳໃຊ້ແບັດຕາຣີທີ່ໃຊ້ພະລັງງານແສງຕາເວັນ

B ຮັບສົ່ງຜູ້ໂດຍສານ ໂດຍການນຳໃຊ້ຍານພາຫະນະຮ່ວມກັນ

C ມາດຕະຖານທາງດ້ານສິ່ງແວດລ້ອມ ສຳລັບຍານພາຫະນະ

D ບ່ອນຈອດລົດພິເສດ ສຳລັບລົດໄຟຟ້າ

**91** ວິທີການເດີນທາງ ຢູ່ພາຍໃນຕົວເມືອງ ປະເພດໃດທີ່ເປັນມິດຕໍ່ສິ່ງແວດລ້ອມຫຼາຍທີ່ສຸດ?

| | |
|---|---|
| A | ລົດໂດຍສານສາທາລະນະ, ເຊັ່ນ ລົດເມ |
| B | ລົດສ່ວນຕົວທີ່ປະຢັດນ້ຳມັນ |
| C | ລົດຖີບ |
| D | ກຸ່ມຄົນທີ່ນຳໃຊ້ລົດຄັນດຽວກັນ ເພື່ອໄປສະຖານທີ່ດຽວກັນ ເຊັ່ນ: ບ່ອນເຮັດວຽກ |

**92** ອາຄານ active building ແມ່ນອາຄານທີ່:

A ບໍ່ມີການນຳໃຊ້ພະລັງງານ

B ຜະລິດພະລັງງານ

C ທຸກສິ່ງທຸກຢ່າງໄດ້ຖືກຄວບຄຸມໂດຍລະບົບຄອມພິວເຕີ

D ຜູ້ຢູ່ອາໄສ ແມ່ນນັກເຄື່ອນໄຫວດ້ານສິ່ງແວດລ້ອມ

**93** ຢູ່ບັນດາປະເທດ ທາງພາກເໜືອ, ອາຄານ passive building ແມ່ນອາຄານທີ່:

| | |
|---|---|
| A | ບໍ່ມີການນຳໃຊ້ພະລັງງານ |
| B | ມີການຕິດຕັ້ງສະນວນຢ່າງດີ ແລະ ເກືອບບໍ່ມີການສູນເສຍພະລັງງານ |
| C | ບໍ່ສອດຄ່ອງກັບມາດຕະຖານດ້ານຕົກອາຄານ |
| D | ບໍ່ໄດ້ຖືກຄວບຄຸມໂດຍລະບົບຄອມພິວເຕີ |

**94** ການສູນເສຍຄວາມຮ້ອນ ຈາກຕົກອາຄານ ຜ່ານຊ່ອງທາງໃດດັ່ງຕໍ່ໄປນີ້:

A ພື້ນເຮືອນ

B ປ່ອງຢ້ຽມ

C ຝາເຮືອນ

D ຫຼັງຄາ

**95** ຂໍ້ເຫຍື້ອປະເພດໃດ ດັ່ງຕໍ່ໄປນີ້ ທີ່ໃຊ້ເວລາຍ່ອຍສະຫຼາຍດົນນານທີ່ສຸດ?

A ເຈ້ຍ

B ສິ່ງເສດເຫຼືອປະເພດອາຫານ

C ຝ້າສຕິກ

D ເຫຼັກ

**96** ທ່ານຄວນຖືຖົງປະເພດໃດ ໃນເວລາໄປຊື້ເຄື່ອງເພື່ອເປັນການຫຼຸດຜ່ອນການສ້າງຂາດການກບອນ?

A ບໍ່ຖືຖົງໄປ - ນຳໃຊ້ຖົງປະເພດໃຊ້ເທື່ອດຽວຈາກທາງຮ້ານຄ້າ

B ຖົງຜ້າສ່ວນຂອງທ່ານ

C ຖົງເຈ້ຍຂອງທ່ານ

D ຖົງຜ້າແຄນວາສ ຫຼື ຖົງຜ້າຝ້າຍຂອງທ່ານ

**97** ຜະລິດຕະພັນໃດເຫຼົ່ານີ້ ທີ່ຄອບຄົວທ່ານຊື້ ທີ່ສ້າງປະລິມານທາດອາຍກາກບອນໜ້ອຍທີ່ສຸດ?

A ຜະລິດຕະພັນທ້ອງຖິ່ນ

B ຜະລິດຕະພັນ ທີ່ໄດ້ມາຈາກຂົງເຂດພູມີພາກອື່ນ

C ຜະລິດຕະພັນ ທີ່ໄດ້ມາຈາກປະເທດເພື່ອນບ້ານ

D ຜະລິດຕະພັນທີ່ແປກໃໝ່ ທີ່ມາຈາກປະເທດທີ່ຢູ່ຫ່າງໄກ

**98** ສິ່ງໃດດັ່ງຕໍ່ໄປນີ້ ຈະຊ່ວຍໃຫ້ໝໍ້ປະຢັດພະລັງງານ?

A ກົ້ນໝໍ້ຄວນມີລັກສະນະໂຄ້ງມົນ

B ຄວນປິດຝາໝໍ້

C ກົ້ນໝໍ້ຄວນຈະນ້ອຍກ່ວາໜ້າເຕົາໄຟຟ້າ

D ຄວນເປີດໝໍ້ໄວ້ຕະຫຼອດເວລາ

**99** ປະເທດທຳອິດ ທີ່ສ້າງເຮືອນປະເພດ active house ແມ່ນປະເທດໃດ?

A ຈີນ

B ດາມມາກ

C ສະເປນ

D ສະຫະລັດອາເມຣິກາ

**100** ອານຸສັນຍາກຽວໂຕ ໄດ້ຮັບການລົງນາມ ຢູ່ທີ່ປະເທດໃດ?

A ສະຫະລັດອາເມຣິກາ

B ຍີ່ປຸ່ນ

C ເຢຍລະມັນ

D ຝຣັ່ງ

# ຖາມຕອບ ກ່ຽວກັບ ສະພາບດິນຟ້າອາກາດ

## ຄຳຕອບ



# ຄຳຕອບ

| | | | | | | |
|---|---|---|---|---|---|---|
| 62. C | 69. A | 76. C | 43. A | 83. A | 90. B | 97. A |
| 63. B | 70. C | 77. D | 44. C | 84. C | 91. C | 98. B |
| 64. C | 71. B | 78. B | 45. D | 85. C | 92. B | 99. B |
| 65. A | 72. D | 79. A | 46. A | 86. D | 93. B | 100. B |
| 66. B | 73. D | 80. C | 47. A | 87. A | 94. B | |
| 67. C | 74. C | 81. D | 48. A | 88. D | 95. C | |
| 68. A | 75. B | 82. B | 49. A | 89. D | 96. D | |